# AGREE

Agripreneurs for Green Rural Enterprise and Employment

# ຂໍ້ມູນຜູ້ປະກອບການໄວໜຸ່ມ ທີ່ເຂົ້າຮ່ວມ ກິດຈະກຳ

# ສົ່ງເສີມທຸລະກິດ ກະສິກຳສີຂຽວ ແລະ ການສ້າງວຽກເຮັດງານທຳ

ບໍລິການ-ສົ່ງເສີມກະສິກຳຮອບດ້ານ ບສກຮ

LURAS Lao Upland Rural Advisory Service

ກົມສົ່ງເສີມເຕັກນິກ ແລະ ປຸງແຕ່ງກະສິກຳ

DTEAP Department of Technical Extension and Agro-Processing

# AGREE: Agripreneurs for Green Rural Enterprise and Employment

# ອາກຣີ: ກິດຈະກຳ ສົ່ງເສີມທຸລະກິດກະສິກຳສີຂຽວ ແລະ ການສ້າງວຽກເຮັດງານທຳ

## ຜູ້ໄດ້ຮັບທຶນ: ປີ 2018

### ສາລະບານ


1. ລ້ຽງໝູ ແລະ ປູກໝາກເຜັດ ........ 1
2. ສວນເສດຖະກິດກະສິກຳຍືນຍົງ (ສວນໝູ່ມນ້ອຍ 100 ໂລ) ........ 2
3. ອີ່ຣອກເງິນລ້ານ ........ 3
4. ສວນກ້າເບ້ຍໄມ້ອຸດສະຫະກຳ ........ 4
5. ທຸລະກິດລ້ຽງຫອຍຈູບ ........ 5

# ລ້ຽງໝູ ແລະ ປູກໝາກເຜັດ



ທ້າວ ສີຫຼ້າ ແສງດາລາ, ອາຍຸ 25 ປີ, ຈົບຊັ້ນສູງ ສາຂາວິຊາປ່າໄມ້ ວິທະຍາໄລກະສິກຳ ແລະ ປ່າໄມ້ພາກເໜືອ, ປັດຈຸບັນຢູ່ ບ້ານ ນ້ຳໂອ, ເມືອງ ວຽງພູຄາ, ແຂວງ ຫຼວງນ້ຳທາ. ເນື່ອງຈາກມີໃຈຮັກ ທາງດ້ານການປູກ, ການລ້ຽງ, ມີຄວາມຮູ້ທາງດ້ານວິຊາການ ແລະ ຢາກສ້າງລາຍຮັບໃຫ້ແກ່ຄອບຄົວຈຶ່ງເຂົ້າຮ່ວມກິດຈະກຳ.

## ທຶນທີ່ໄດ້ຮັບ:

ທຶນທັງໝົດທີ່ໄດ້ຮັບແມ່ນ 16,000,000 ກີບ (ສິບຫົກລ້ານກີບຖ້ວນ).

## ປະເພດທຸລະກິດ:

ທຸລະກິດ ເປັນການເຮັດສວນແບບປະສົມປະສານ ໂດຍການແບ່ງອອກເປັນ 2 ກິດຈະກຳຫຼັກຄື: ລ້ຽງໝູ ແລະ ປູກຫມາກເຜັດ.

## ການນຳໃຊ້ທຶນ:

ການນຳໃຊ້ທຶນແມ່ນໄດ້ນຳໃຊ້ເຂົ້າໃນການຈັດຊື້ອຸປະກອນ, ຈ້າງຄົນມາຖາງຫຍ້າ, ເຮັດໜານ, ປູກຜັກ, ເສຍຫຍ້າ, ບຸກເບີກພື້ນທີ່ສວນ, ຊື້ອຸປະກອນເພື່ອຕັ້ງຄອກໝູ ແລະ ຊື້ແນວພັນເຊັ່ນ: ແນວພັນໝາກເຜັດ - ໝູ, ຄ່າແຮງງານ ແລະ ຄ່ານາຍຊ່າງ.

## ຈຸດດີ ແລະ ສິ່ງທ້າທາຍ:

ຈຸດດີ: ຜະລິດຕະພັນຂອງເຮົາ ມີຄວາມສົດໃຫມ່ຕະຫລອດ, ເປັນຜະລິດຕະພັນ ປອດສານເຄມີ, ເປັນຜະລິດຕະພັນພື້ນບ້ານ.

ສິ່ງທ້າທ້າຍ: ຜະລິດຕະພັນຍັງບໍ່ພຽງພໍເພື່ອຕອບສະໜອງຕາມຄວາມຕ້ອງການຂອງຕະຫລາດ ເຮັດໃຫ້ບໍ່ສາມາດຕີລາຄາເປັນວົງກ້ວາງ, ເປັນທຸລະກິດມີໃຫມ່ຍັງຂາດປະສົບການທາງດ້ານການຕະຫລາດ,  ຍັງບໍ່ມີການໂຄສະນາ ແລະ ຕີຕະຫລາດໃນທາງດ້ານອອນລາຍ.

## ເປົ້າໝາຍ:

ເພີ່ມປະລິມານໝາກເຜັດດິບໃຫ້ໄດ້ 500 ກິໂລ/ຊຸດ ແລະ ໝາກເຜັດແຫ້ງໃຫ້ໄດ້ 100 ກິໂລ/ຊຸດ, ເພີ່ມປະລິມານໝູໃຫ້ໄດ້ 20 ໂຕ/ຊຸດ, ເພີ່ມຂະຫຍາຍກິດຈະກຳໃຫມ່ເຊັ່ນ: ການຜະລິດເຫັດນາງຟ້າ - ເຫັດນາງລົມໃຫ້ໄດ້ 1,500 ເບົ້າ/ຊຸດ ແລະ ເພີ່ມຂະຫຍາຍໄມ້ໃຫ້ໝາກເຊັ່ນ: ໝາກກາເຟ ໃຫ້ໄດ້ 500 ຕົ້ນ, ຫມາກກະທັນໃຫ້ໄດ້ 500 ຕົ້ນ.

## ຜົນໄດ້ຮັບ:

- ໃນປີ 2019 ມີລາຍຮັບຈາກການຂາຍຫມາກເຜັດດິບ 482 ກິໂລ= 8,676,000 ກີບ, ຂາຍໝູ 6 ໂຕ= 4,800,000 ກີບ, ລວມ 13,476,000 ກີບ.
- ໃນປີ 2020 ຂາຍຫມາກເຜັດດິບ 240 ກິໂລ=2,880,000 ກີບ, ຂາຍໝາກຖົ່ວ 3,400 ກິໂລ=5,440,000 ກີບ, ລວມ 8,320,000 ກີບ.









ສົນໃຈຕິດຕໍ່:

ເບີໂທ ຫຼື ວ໊ອດແອັບ: 020 9988 3287, ເຟສບຸກ: lar sengdala vpk



# ສວນເສດຖະກິດກະສິກຳຍືນຍົງ (ສວນໜຸ່ມນ້ອຍ 100 ໂລ)

ທ້າວ ຕຸ້ຍ ຈັນທະບຸນທຳ, ອາຍຸ 24 ປີ, ຈົບຊັ້ນສູງ ສາຂາວິຊາປ່າໄມ້ ທີ່ວິທະຍາໄລກະສິກຳ ແລະ ປ່າໄມ້ພາກເໜືອ ປັດຈຸບັນຢູ່ບ້ານ ນ້ຳເງິນ, ເມືອງ ວຽງພູຄາ, ແຂວງ ຫຼວງນ້ຳທາ. ເນື່ອງຈາກມີໃຈຮັກທາງດ້ານການປູກຝັງ-ລ້ຽງສັດ, ມີຄວາມຝັນຢາກເປັນຜູ້ປະກອບການໜຸ່ມທີ່ປະສົບຜົນສຳເລັດທາງດ້ານທຸລະກິດ ແລະ ສາມາດສ້າງລາຍຮັບໃຫ້ແກ່ຄອບຄົວຈຶ່ງເຂົ້າຮ່ວມກິດຈະກຳ.





## ທຶນທີ່ໄດ້ຮັບ:

ໄດ້ຮັບທຶນທັງໝົດແມ່ນ 16,000,000 ກີບ (ສິບຫົກລ້ານກີບຖ້ວນ).

## ປະເພດທຸລະກິດ:

ທຸລິດກິດທີ່ເຮັດຢູ່ແມ່ນ ການເຮັດສວນແບບປະສົມປະສານ ໂດຍການແບ່ງອອກເປັນ 2 ກິດຈະກຳຫຼັກຄື: ປູກໄມ້ໃຫ້ໝາກ (ໝາກມ່ວງ, ໝາກມີ້, ໝາກກ້ຽງ, ໝາກກ້ວຍ ແລະ ກ້າເບ້ຍໄມ້ໃຫ້ໝາກ) ແລະ ລ້ຽງສັດ: ລ້ຽງປາ, ລ້ຽງໄກ່ພັນໄຂ່, ໄກ່ດູກດຳ ແລະ ຜະລິດລູກໄກ່ນ້ອຍ.

## ການນຳໃຊ້ທຶນ:

ໄດ້ນຳໃຊ້ເຂົ້າໃນການຈັດຊື້ຈັດຈ້າງ, ບຸກເບີກເນື້ອທີ່ສວນ, ຈົກຫນອງປາ, ຊື້ອຸປະກອນກໍ່ສ້າງໂຮງເຮືອນ, ຊື້ຫລັກຮົ້ວ, ລວດຫນາມ ແລະ ແນວພັນເຊັ່ນ :ໄກ່ໄຂ່, ໄກ່ດູກດຳ, ປາ, ເບ້ຍໄມ້ ແລະ ຄ່າແຮງງານ.



## ຈຸດດີ ແລະ ສິ່ງທ້າທາຍ:

ຈຸດດີ: ຜະລິດຕະພັນຂອງເຮົາມີຄວາມສົດໃຫມ່ທຸກມື້, ເປັນຜົນຜະລິດທີ່ປອດສານເຄມີ, ມີລົດຊາດແຊບ ແລະ ມີໂພສະນາການສູງ

ສິງທ້າທ້າຍ: ຜົນຜະລິດຍັງມີບໍ່ພຽງພໍເພື່ອຕອບສະຫນອງຕໍ່ຕະຫລາດເຮັດໃຫ້ຍັງບໍ່ສາມາດຕີຕະຫລາດເປັນວົງກ້ວາງ, ຍັງບໍ່ສາມາດຜະລິດອາຫານເອງໄດ້ເນື່ອງຈາກບໍ່ມີອຸປະກອນທີ່ທັນສະໄຫມ, ຍັງບໍ່ໄດ້ມີການໂຄສະນາ ແລະ ຕີຕະຫລາດທາງອອນລາຍ.

## ເປົ້າໝາຍ:

ເພີ່ມປະລິມານການຜະລິດໃຫ້ໄດ້ຄື: ໄຂ່ໄກ່ 1,500 ຫນ່ວຍ/ມື້, ກ້ວຍໃຫ້ໄດ້ 150 ຫວີ/ມື້, ປາໃຫ້ໄດ້ 2,000 ກິໂລ/ຊຸດ, ໄກ່ຊີ້ນໃຫ້ໄດ້ 200 ໂຕ/ຊຸດ, ເພີ່ມຂະຫຍາຍກິດຈະກຳໃຫມ່ເຊັ່ນ: ການຜະລິດລູກກົບ-ລູກປາ ໃຫ້ໄດ້ 100,000 ໂຕ/ຊຸດ, ສົ່ງອອກຂາຍລູກໄກ່ໄປຕ່າງເມືອງ ແລະ ຕ່າງແຂວງໃຫ້ໄດ້ 2,000/ຊຸດ.



## ຜົນໄດ້ຮັບ:

- ໃນປີ 2019 ຈາກການຂາຍໄຂ່ 540 ໜ່ວຍ, ໄກ່ຊີ້ນ 20 ກິໂລ, ຂາຍພໍ່ແມ່ພັນໄກ່ດູກດຳ 3 ຄູ່, ຂາຍໄກ່ຫມົດໄຂ່ 58ໂຕ ລວມລາຍຮັບ 19,220,000 ກີບ.
- ໃນປີ 2020 ມີລາຍຮັບຈາກການຂາຍໄຂ່ໄກ່ 8,947 ໜ່ວຍ, ຂາຍພໍ່-ແມ່ພັນໄກ່ 5 ຄູ່, ຂາຍໄກ່ນ້ອຍ ຈຳນວນ 40 ຄູ່ ແລະ ຂາຍໄກ່ຊີ້ນ 50 ກິໂລ ເປັນມູນຄ່າ 11,857,600 ກີບ.

ສົນໃຈຕິດຕໍ່:

ເບີໂທ ຫຼື ວັອດແອັບ: 020 9543 0023, ເຟສບຸກ: ທ້າວ ຕຸ້ຍ ຈັນທະບຸນທຳ



# ອຶ່ງອ່າງເງິນລ້ານ

ນາງ ສຸວັນນາ ສົມຈັນມະວົງ, ອາຍຸ 22 ປີ, ລະດັບການສຶກສາຊັ້ນສູງ, ບ້ານ ໜອງຊາຍ, ເມືອງ ຫ້ວຍຊາຍ, ແຂວງ ບໍ່ແກ້ວ. ເພາະມີຄວາມຮັກມັກໃນວຽກງານກະສິກຳຈຶ່ງໄດ້ເຂົ້າຮ່ວມແຂ່ງຂັນທຸລະກິດກະສິກຳ ທີ່ວິທະຍາໄລກະສິກຳ ແລະ ປ່າໄມ້ພາກເໜືອ ທີ່ທາງຄູອາຈານເພິ່ນໄດ້ແນະນຳໃຫ້.

## ທຶນທີ່ໄດ້ຮັບ:

ໄດ້ຮັບທຶນທັງໝົດ ແມ່ນ 16,000,000 ກີບ. (ສິບຫົກລ້ານກີບຖ້ວນ).

## ປະເພດທຸລະກິດ:

ລ້ຽງອຶ່ງອ່າງ ແລະ ປູກຜັກ.

## ການນຳໃຊ້ທຶນ:

ມີການຊື້ອຸປະກອນສ້າງໂຮງເຮືອນ, ຊື້ພໍ່ແມ່ພັນກົບ, ຊື້ຫົວອາຫານ ແລະ ຈ້າງແຮງງານໃນການກໍ່ສ້າງໂຮງເຮືອນ.

## ຈຸດດີ ແລະ ສິ່ງທ້າທາຍ:

ຈຸດດີ: ຂອງທຸລະກິດເຮົາແມ່ນດຶງດູດລູກຄ້າໄດ້ຫລາຍກວ່າບ່ອນອື່ນເພາະເຮົາມີບໍລິການສົ່ງເຖິງທີ່, ຊື້ຫລາຍໄດ້ລາຄາສົ່ງ, ຜະລິດຕະພັນມີຄວາມພໍດີບໍ່ໃຫຍ່ເກີນໄປຄືກົບໄທ ແລະ ບໍ່ນ້ອຍຈ່ອຍເກີນຄວນ.

ສິ່ງທ້າທາຍຂອງທຸລະກິດ: ແມ່ນເລີ່ມມີຄູ່ແຂ່ງ ແລະ ຍັງຕອບສະໜອງຄວາມຕ້ອງການຂອງຕະຫຼາດບໍ່ໄດ້.

## ເປົ້າໝາຍ:

ເປົ້າໝາຍ ໃນປີ 2020 ແມ່ນຢາກຂາຍກົບໃຫ້ໄດ້ 160 ກິໂລ/ເດືອນ.

## ຜົນໄດ້ຮັບ:

- ໃນປີ 2019 ຂາຍກົບ 720 ກິໂລ = 18,000,000 ກີບ ຂາຍໄດ້ພຽງແຕ່ 8 ເດືອນເທົ່ານັ້ນ ເພາະຊ່ວງລະດູໜາວນໍ້າໜັກກົບຈະຫຼຸດລົງເຮົາເລີຍບໍ່ເອົາກົບອອກຂາຍ ແລະ ຂາຍຜັກຕາມລະດູການແຕ່ເດືອນ ພະຈິກ-ທັນວາ ແມ່ນ 1,600,000 ກີບ. ລວມລາຍຮັບທັງໝົດ ປີ 2019 ແມ່ນ 19,600,000 ກີບ.
- ໃນປີ 2020 ຂາຍກົບແຕ່ເດືອນ ມີນາ-ກໍລະກົດ 520 ໂຕ = 20,000,000 ກີບ (ລາຄາກົບສູງກວ່າປີ 2019) ແລະ ຂາຍຜັກຕາມລະດູການແຕ່ເດືອນ ມັງກອນ-ກໍລະກົດ 5,600,000 ກີບ. ລວມລາຍຮັບທັງໝົດ ປີ 2020 ແມ່ນ 25,600,000 ກີບ.











ສົນໃຈຕິດຕໍ່:

ເບີໂທ ຫຼື ວັອດແອັບ: 020 77407933, ເຟສບຸກ: Pou souvanna ScmV



# ສວນກ້າເບ້ຍໄມ້ອຸດສາຫະກຳ

ຂ້າພະເຈົ້າຊື່ ທ້າວ ຄຳຫລ້າ ສຸກທິລາດ ອາຍຸ 26 ປີ, ຈົບສາຂາວິຊາ ປ່າໄມ້ ຊັ້ນສູງ. ເກີດທີ່ ບ້ານ ນາສ້າວ , ເມືອງໄຊ, ແຂວງອຸດົມໄຊ. ເຫດຜົນທີ່ເຂົ້າຮ່ວມກິດຈະກຳ ເພາະວ່າຈະໄດ້ ມີທຶນມາໃຊ້ໃນການປະກອບການທຸລະກິດຂອງຕົນເອງ ເນື່ອງຈາກ ປັດຈຸບັນແມ່ນຊອກວຽກ ເຮັດງານທຳ ຫຍຸ້ງຍາກຫລາຍ.

## ທຶນທີ່ໄດ້ຮັບ:

ໄດ້ຮັບທຶນທັງໝົດ ແມ່ນ 16,000,000 ກີບ. (ສິບຫົກລ້ານກີບຖ້ວນ).





## ປະເພດທຸລະກິດ:

ສວນກ້າເບ້ຍໄມ້ອຸດສາຫະກຳ.

## ການນຳໃຊ້ທຶນ:

ການນຳໃຊ້ທຶນແມ່ນຊື້ອຸປະກອນຕ່າງໆເຊັ່ນ: ລໍ້ຍູ້, ຈົກ, ຊ້ວນ, ຈອບຮ່າຍເບົ້າ, ຖົມດິນປັບພື້ນທີ່ ແລະ ອື່ນໆທີ່ຈຳເປັນເຂົ້າໃນການເຮັດກິດຈະກຳ ລວມທັງຄ່ານໍ້າຕ່າງໆ.

## ຈຸດດີ ແລະ ສິ່ງທ້າທາຍ:

ຈຸດດີຂອງທຸລະກິດຂອງຂ້າພະເຈົ້າແມ່ນ ຢູ່ໃກ້ວັດຖຸດິບເຮັດໃຫ້ໄດ້ວັດຖຸດິບລາຄາຖືກ. ສິ່ງທ້າທາຍກໍຄື ພື້ນທີ່ມີຈຳກັດ ແລະ ບໍ່ສະດວກປານໃດໃນການເຮັດກິດຈະກຳ, ພາຍໃນພື້ນທີ່ເທດສະບານທີ່ຕັ້ງຂອງເມືອງແມ່ນມີຄູ່ແຂ່ງທີ່ໃຫຍ່ກ່ວາ ແລະ ໄດ້ປຽບກວ່າ ເພາະວ່າເຂົາເຈົ້າແມ່ນນຳເຂົ້າເບ້ຍໄມ້ມາຈາກຕ່າງປະເທດເພື່ອມາຂາຍຕໍ່ (ໝາຍເຫດ: ກິດຈະກຳຂອງນ້ອງດຽວນີ້ແມ່ນຈະໄດ້ມີການໂຈະຊົ່ວຄາວເນື່ອງຈາກວ່າ ມີການເພີ່ມຂື້ນຂອງຈຳນວນສະມາຊິກໃນຄອບຄົວ ຈຳເປັນຕ້ອງໄດ້ມີການຂະຫຍາຍເຮືອນອອກ ໄປປຸກໃສ່ບ່ອນທີ່ມີການເຮັດກິດຈະກຳດັ່ງກ່າວ.



## ເປົ້າໝາຍ:

ເປົ້າຫມາຍຄິດວ່າຈະຂະຫຍາຍ ຈຳນວນເບັ້ຍໄມ້ໃຫ້ຫລາຍຂື້ນຖ້າວ່າມີສະຖານທີ່ ທີ່ອຳນວຍຄວາມສະດວກຫລັງຈາກສຳເລັດການປຸກສ້າງເຮືອນ ເພາະວ່າກິດຈະກຳໂຕນີ້ຈະເປັນລາຍໄດ້ເສີມໃຫ້ກັບຄອບຄົວຈຳນວນໜື່ງ.

## ຜົນໄດ້ຮັບ:

ໃນປີ 2019 ມີລາຍຮັບຈາກການຂາຍເບ້ຍໄມ້ແມ່ນປະມານ 700,000 ກີບ, ໃນປີ 2020 ຂາຍເບ້ຍໄມ້ໄດ້ປະມານ 1,000,000 ກີບ ລວມລາຍຮັບຈາກການຂາຍເບ້ຍໄມ້ແມ່ນ ປະມານ 1,7000,0000 ກີບ.



ສົນໃຈຕິດຕໍ່:
ເບີໂທ ຫຼື ວັອດແອັບ: 020 54321093, ເຟສບຸກ: ທ້າວ ຄຳຫລ້າ ສຸກທິລາດ



# ທຸລະກິດລ້ຽງຫອຍຈູບ

ຂ້າພະເຈົ້າຊື່ ນາງ ນໍ້າຝົນ ກຸນນະວົງ , ເກີດເມື່ອວັນທີ 27/02/1998, ລະດັບການສຶກສາຈົບຊັ້ນສູງ. ປັດຈຸບັນຢູ່ບ້ານ ສາລາຄຳໃຕ້, ເມືອງຫາດຊາຍຟອງ, ແຂວງນະຄອນຫຼວງວຽງຈັນ. ເພື່ອເປັນການສ້າງປະສົບການ ແລະ ພັດທະນາຄວາມສາມາດໃຫ້ແກ່ຕົນເອງຈຶ່ງໄດ້ເຂົ້າຮ່ວມກິດຈະກຳດັ່ງກ່າວ.

## ທຶນທີ່ໄດ້ຮັບ:

ໄດ້ຮັບທຶນທັງໝົດ ແມ່ນ 8,000,000ກີບ (ແປດລ້ານກີບ).







## ປະເພດທຸລະກິດ:

ທຸລະກິດລ້ຽງຫອຍຈູບ.

## ການນຳໃຊ້ທຶນ:

ໃຊ້ທຶນ: 3,000,000 ກີບ ໃນການປັບພື້ນທີ່ຂຸດໜອງເພີ່ມ ເນື່ອງຈາກໜອງເກົ່ານໍ້າບໍ່ສາມາດລ້ຽງໄດ້. 2,000,000ກີບ ສຳລັບການຊື້ກະ ຊັງ, 1,000,000 ກີບ ສຳລັບການຊື້ອຸປະກອນເຊັ່ນ: ໄມ້, ຕະປູ, ລວດ, ຄຸ, ກະຕ່ອງໃນການສ້າງກະຊັງ ແລະ ການລ້ຽງ 1,500,000ກີບ ຊື້ແນວພັນ ແລະ ອາຫານຫອຍ 500,000 ກີບ ເປັນເງິນໝູນວຽນໃນການຊື້ອາຫານຫອຍ.

## ຈຸດດີ ແລະ ສິ່ງທ້າທາຍ:

ຈຸດດີຂອງທຸລະກິດຄື: ສະດວກຕໍ່ຜູ້ບໍລິໂພກ ສາມາດສັ່ງໄດ້ຕະຫລອດ ແລະ ເປັນທຸລະກິດທີ່ຍັງບໍ່ມີໃຜເຮັດ. ສິ່ງທ້າທາຍທີ່ພົບແມ່ນການກົດລາຄາໃນທ້ອງຕະຫຼາດ, ຄູ່ແຂ່ງ (ເຖິງຈະມີໜ້ອຍແຕ່ກໍມີປະສິດທິພາບໃນການກົດລາຄາສິນຄ້າຂອງເຮົາ) ແລະ ໄພທຳມະຊາດ (ນໍ້າຖ້ວມ).

## ເປົ້າໝາຍ:

ເປົ້າໝາຍໃນຕອນລິເລີ່ມທຸລະກິດແມ່ນຕ້ອງການຂະຫຍາຍທັງແນວພັນ ແລະ ລາຍຮັບເພາະຖ້າລ້ຽງໄປໄດ້ໃນງວດທຳອິດຈະສາມາດເຮັດໃຫ້ເພີ່ມຜົນຜະລິດໄດ້ຕະຫລອດປີ ແລະ ໃນແຕ່ລະປີຍັງລົດຕົ້ນທຶນໃນການຊື້ຫົວອາຫານອີກ.

ແຕ່ສາເຫດທີ່ເຮັດໃຫ້ທຸລະກິດຂອງຂ້າພະເຈົ້າບໍ່ສາມາດດຳເນີນໄປໄດ້ເນື່ອງຈາກເວລາໃນການຈັດການຂອງຂ້າພະເຈົ້າຍັງມີຫນ້ອຍ ແລະ ໄພທຳມະຊາດເກີດຂຶ້ນໃນເຂດພື້ນທີ່ (ນໍ້າຖ້ວມ).

## ຜົນໄດ້ຮັບ:

ລາຍຮັບຕັ້ງແຕ່ຊ່ວງເລີ່ມກິດຈະກຳຈົນເຖິງຊ່ວງຢຸດແມ່ນມີໄລຍະເວລາ 8 ເດືອນ, ລາຍຮັບລວມທັງໝົດ ມີປະມານ 800,000ກີບ.


ສົນໃຈຕິດຕໍ່:
ເບີໂທ ຫຼື ວັອດແອັບ: 02055039906, R'namfon kounnavong